ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 0769 /ກທຄວ
ນະຄອນຫລວງວຽງຈັນ,ວັນທີ 02 ມິຖຸນາ 2017

# ແຈ້ງການ

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ
- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ;

ເລື່ອງ: ໃຫ້ໄຈ້ຂໍ້ມູນວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດຜ່ານມາຄືນໃໝ່

- ອີງຕາມແຈ້ງການ ໃຫ້ບັນທຶກລະຫັດວິສາຫະກິດຖ້າມີການປ່ຽນແປງ ເລກທີ0756/ສລທ.ທຖຊ, ລົງວັນທີ 30/07/2012;

ເພື່ອເຮັດໃຫ້ຂໍ້ມູນວິສາຫະກິດ ສອດຄ່ອງກັບຄວາມເປັນຈິງ ແລະ ແກ້ໄຂຊ່ອງຫວ່າງຄວາມຜິດພາດຕ່າງໆ ໃຫ້ເຂົ້າສູ່ລະບົບມາດຕະຖານສາກົນ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ໃຫ້ໄຈ້ຂໍ້ມູນຫົວໜ່ວຍວິສາຫະກິດຄືນໃໝ່ ຕາມລາຍຊື່ທີ່ໄດ້ຄັດຈ້ອນຈາກລະບົບຄຸ້ມຄອງຖານຂໍ້ມູນວິສາຫະກິດແຫ່ງຊາດ, ຊຶ່ງໃນແຕ່ລະແຂວງ(ຍົກເວັ້ນນະຄອນຫລວງ) ລວມມີຈຳນວນທັງໝົດ 6.799 ຫົວໜ່ວຍ;
2. ໃຫ້ກວດເບິ່ງສາເຫດຂອງການຊ້ຳ, ຖ້າເຫັນວ່າມີຫົວໜ່ວຍຊ້ຳກັນແທ້ ໃຫ້ລຶບອອກຈາກລະບົບໂປຣແກຣມ, ກໍລະນີຊ້ຳກັນຍ້ອນມີການປ່ຽນແປງທະບຽນວິສາຫະກິດ ຂອງຂັ້ນກະຊວງ ຫຼື ພະແນກ ໃຫ້ແຈ້ງເລກລະຫັດທີ່ຖືກປ່ຽນແປງນັ້ນໃຫ້ເຈົ້າໜ້າທີ່ທະບຽນບ່ອນທີ່ອອກທະບຽນວິສາຫະກິດຜ່ານມາ ແລະ ໃຫ້ບ່ອນທີ່ອອກທະບຽນຜ່ານມານັ້ນລຶບອອກຈາກລະບົບໂປຣແກຣມເຊັ່ນດຽວກັນ;
3. ວິທີໄຈ້: ຈັດເອົາຫົວໜ່ວຍທີ່ຊ້ຳກັນແຍກເປັນແຕ່ລະເມືອງ ແລະ ແຍກໃຫ້ຖືກກັບຕົວລັບ (ກ=ພ, ພ=ມ) ທີ່ໄດ້ຈັດໄວ້ໃນ sheet ຂອງ Excel ເພື່ອສະດວກໃນການໄຈ້. (ຄວາມໝາຍຂອງຕົວລັບໃຫ້ເບິ່ງໃນໝາຍເຫດຕາຕະລາງຄັດຕິດພ້ອມນີ້);
4. ວິທີລຶບ: ເຂົ້າໂປຣແກຣມ ຈາກນັ້ນພິມລະຫັດທີ່ຈະລຶບໃສ່ໃນບ່ອນຊອກຂໍ້ມູນ, ກົດແກ້ໄຂ, ກົດ✓ໃສ່ບ່ອນລົບລ້າງທະບຽນ, ພິມຄຳວ່າ(deleted)ໃສ່ໝາຍເຫດ ແລະ ກົດ Save (ມີຄູ່ມືວິທີລຶບຄັດຕິດພ້ອມນີ້);
5. ກຳນົດເວລາຈັດຕັ້ງປະຕິບັດໃຫ້ສຳເລັດກ່ອນວັນທີ 30 ມິຖຸນາ 2017;

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ. ສົມພອງ ພຽນພົມິດ

ຕິດຕໍ່ພົວພັນ:
- ເບິ່ງປາງ 02022516330; ພອນໝວາ: 02091427184

Scanned with CamScanner